# ສປປ ລາວ

ໂຄງການສ້າງຄວາມທົນທານຂອງປະຊາກອນ
ໃນຕົວເມືອງເພື່ອປັບຕົວເຂົ້າກັບການປ່ຽນ
ແປງດິນຟ້າອາກາດໂດຍການຄຸ້ມຄອງ ແລະ
ນຳໃຊ້ທ່າແຮງຂອງລະບົບນິເວດ

## ສັງລວມນະໂຍບາຍໂດຍຫຍໍ້ : ກົນໄກການໄກ່ເກ່ຍ



PHOTO: © URBAN EBS LAO PDR

## I. ກົນໄກການໄກ່ເກ່ຍແບບສະເພາະຂອງໂຄງການ.

ແຜນການຈັດຕັ້ງປະຕິບັດຄວາມຮັບຜິດຊອບດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງ "ໂຄງການສ້າງຄວາມທົນທານຂອງປະຊາກອນໃນຕົວເມືອງເພື່ອປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໂດຍການຄຸ້ມຄອງ ແລະ ນຳໃຊ້ທ່າແຮງຂອງລະບົບນິເວດ" ໄດ້ຊີ້ແຈງເຖິງຄວາມຕ້ອງການໃນການສ້າງຕັ້ງກົນໄກການແກ້ໄຂການຮ້ອງທຸກແບບສະເພາະຂອງໂຄງການ ເພື່ອເກັບກຳຄຳເຫັນ ແລະ ຄຳຮ້ອງທຸກ ຈາກພາກສ່ວນ ຫຼື ບຸກຄົນທີ່ໄດ້ຮັບຜົນກະທົບບໍ່ວ່າຈະເປັນທາງກົງ ແລະ ທາງອ້ອມ. ຈຸດປະສົງຂອງກົນໄກການແກ້ໄຂການໄກ່ເກ່ຍແບບສະເພາະຂອງໂຄງການ ແມ່ນຂະບວນການແກ້ໄຂຄຳຮ້ອງທຸກທີ່ສາມາດເຂົ້າເຖິງ, ວ່ອງໄວ, ຍຸດຕິທຳ ມີຄວາມແທດເໝາະ ແລະ ມີປະສິດທິພາບໃນການໄກ່ເກ່ຍບໍ່ວ່າຈະເປັນທາງກົງ ຫຼື ທາງອ້ອມ. ໂຄງການໄດ້ສ້າງຕັ້ງກົນໄກການໄກ່ເກ່ຍແບບສະເພາະຂອງໂຄງການຕາມຂະບວນການຄື: (1) ຂະບວນກົນໄກການໄກ່ເກ່ຍ (GRM) ແມ່ນຖືກຕ້ອງຕາມກົດໝາຍເພື່ອຮັບປະກັນໃຫ້ຜູ້ທີ່ມີຄວາມກັງວົນໃຈຈະໄດ້ຮັບການປະເມີນຢ່າງຍຸດຕິທຳ ແລະ ໂປ່ງໃສ; (2) ໃຫ້ທຸກພາກສ່ວນກ່ຽວຂ້ອງສາມາດເຂົ້າເຖິງແບບງ່າຍດາຍ; (3) ຂະບວນກົນໄກການໄກ່ເກ່ຍມີຄວາມຈະແຈ້ງຕາມລະບຽບແຕ່ລະຂັ້ນຕອນ; ແລະ (4) ສາມາດປັບປຸງຂະບວນການໄກ່ເກ່ຍໃຫ້ດີຂຶ້ນເລື້ອຍໆ.

ໂຄງການຈະນຳໃຊ້ເຄື່ອງມືໃນການສື່ສານຜ່ານຫຼາກຫຼາຍຮູບແບບເພື່ອຮັບປະກັນວ່າກົນໄກການໄກ່ເກ່ຍໄດ້ຖືກຮັບຮູ້ ແລະ ສາມາດເຂົ້າເຖິງທຸກພາກສ່ວນທີ່ກ່ຽວຂ້ອງກັບໂຄງການ, ບັນດາຊຸມຊົນຕ່າງໆໄດ້ຢ່າງທົ່ວເຖິງ. ນອກຈາກນັ້ນທາງໂຄງການຍັງຈະນຳໃຊ້ໂອກາດນີ້ໃນການເຜີຍແຜ່ໂຄສະນາກ່ຽວກັບຂໍ້ມູນມີດັ່ງນີ້:

- ວາງສະແດງຮູບໂປສເຕີ້ ແລະ ຂໍ້ມູນທີ່ກ່ຽວກັບພາກສ່ວນທີ່ກ່ຽວຂ້ອງຂອງລັດ ແລະ ພາກສ່ວນອື່ນໆ ເປັນຕົ້ນແມ່ນໂຮງຮຽນຂອງລັດ, ໃນຫ້ອງການບ້ານ ແລະ ອື່ນໆ, ທີ່ສາມາດເຂົ້າເຖິງໄດ້ໂດຍທົ່ວໄປ.
- ການໃຫ້ຂໍ້ມູນຈາກຄະນະຈັດຕັ້ງປະຕິບັດໂຄງການຂັ້ນແຂວງ ຫຼື ຜູ້ຕາງໜ້າຂັ້ນທ້ອງຖິ່ນໃຫ້ແຕ່ລະຊຸມຊົນໃນແຕ່ລະກິດຈະກຳຂອງໂຄງການ.
- ການເຜີຍແຜ່ຂໍ້ມູນຂ່າວສານຜ່ານວິທະຍຸທ້ອງຖິ່ນ ແລະ ລາຍງານຜ່ານທາງ FM.
- ການປະສົມປະສານກັບກິດຈະກຳຂອງໂຄງການໂຄສະນາປູກຈິດສຳນຶກ ກ່ຽວກັບການປັບຕົວໂດຍອີງໃສ່ທ່າແຮງຂອງລະບົບນິເວດ EbA
- ການສື່ສານຮູບແບບເປັນທາງການຜ່ານທາງຈົດໝາຍ ແລະ ອີເມວກັບຜູ້ມີສ່ວນຮ່ວມຂອງໂຄງການ.
- ນຳສະເໜີ ໃນກອງປະຊຸມຄະນະຊີ້ນຳໂຄງການຂັ້ນສູນກາງ, ຄະນະຊີ້ນຳໂຄງການຂັ້ນແຂວງ, ກອງປະຊຸມພາຍໃນຊຸມຊົນ.

ກຊສ MONRE — GREEN CLIMATE FUND — UN environment programme

## ມາດຕະການກົນໄກການໄກ່ເກ່ຍຢ່າງມີປະສິດທິພາບ:

• ກົນໄກການໄກ່ເກ່ຍໄດ້ອີງໃສ່ກົດໝາຍແຫ່ງຊາດທີ່ມີຢູ່ແລ້ວ ແລະ ຄູ່ມືແນະນຳ ກ່ຽວກັບກົນໄກການແກ້ໄຂການຮ້ອງທຸກ.

• ກິດຈະກຳການສື່ສານທີ່ເໝາະສົມ ຈະຢູ່ໃນສະຖານທີ່ເພື່ອແຈ້ງໃຫ້ຊາບກ່ຽວກັບກິດຈະກຳຂອງໂຄງການ ແລະ ຜົນກະທົບທີ່ເປັນໄປໄດ້.

• ເອົາໃຈໃສ່ເປັນພິເສດເຖິງບັນດາມາດຖານເສດຖະກິດ - ສັງຄົມ ແລະ ວັດທະນະທຳຢູ່ລາວ. ກົນໄກຍັງຈະໄດ້ຮັບການນຳສະເໜີໃນລັກສະນະທີ່ເໝາະສົມ.

• ຮັບປະກັນຄວາມສະເໝີພາບໃນການສ້າງການພົວພັນໃນບັນດາຄູ່ຮ່ວມງານ, ພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຜົນກະທົບໄປໃນທາງທີ່ດີ.

• ໂຄງການດັ່ງກ່າວ ຈະຮັບປະກັນກົນໄກນີ້ ສຳລັບພາກສ່ວນທີ່ໄດ້ຮັບຜົນກະທົບໂດຍມີການເຈລະຈາ ຕໍ່ບັນດານະໂຍບາຍ ແລະ ການຕັດສິນໃຈ ຂອງໂຄງການທີ່ອາດຈະສົ່ງຜົນກະທົບທາງລົບຕໍ່ພວກເຂົາ.

• ໂຄງການດັ່ງກ່າວຈະລວບລວມບັນດາກິດຈະກຳຕ່າງໆຂອງພາກສ່ວນທີ່ອາດຈະໄດ້ຮັບຜົນກະທົບ ເພື່ອເປັນການຫຼີກເວັ້ນການຮ້ອງທຸກ ຫຼື ຂໍ້ຂັດແຍງ ທີ່ຈະເກີດຂຶ້ນກ່ອນຖືກນຳສະເໜີຕໍ່ຜູ້ຮັບຜິດຊອບ.

• ໂຄງການຈະຕ້ອງຮັບປະກັນວ່າການເຂົ້າເຖິງ ກົນໄກການໄກ່ເກ່ຍຈະລວມໄປເຖິງດ້ານພາສາທ້ອງຖິ່ນທີ່ຖືກນຳໃຊ້.

• ໂຄງການຈະຮັບປະກັນວ່າສ່ວນບຸກຄົນ ຫຼື ກຸ່ມ ຈະບໍ່ໄດ້ຮັບຜົນກະທົບທາງດ້ານການເງິນຈາກຂະບວນການໄກ່ເກ່ຍ.

## ຂະບວນການລົງທະບຽນການຄຳຮ້ອງ

ບຸກຄົນ ຫຼື ກຸ່ມຊຸມຊົນ ທີ່ມີຄຳຮ້ອງ ຫຼື ທີ່ໄດ້ຮັບຜົນກະທົບຈາກ ກິດຈະກຳຂອງໂຄງການ ທາງກົງ ຫຼື ທາງອ້ອມສາມາດສະເໜີ ຫຼື ສົ່ງຄຳຮ້ອງຕາມຄວາມເໝາະສົມ ຜ່ານຊ່ອງທາງດັ່ງລຸ່ມນີ້:

• ຈັດກອງປະຊຸມໂດຍກົງ: ໂດຍມີບຸກຄົນ ຫຼື ກຸ່ມຊຸມຊົນສາມາດພົບໄດ້ໂດຍກົງກັບຜູ້ປະສານຫຼັກ, ພະນັກງານໂຄງການ, ຜູ້ນຳຂອງບ້ານ/ເມືອງ/ແຂວງ ເພື່ອສະແດງຄຳຮ້ອງ ແລະ ຄວາມກັງວົນຂອງເຂົາເຈົ້າ.

• ຕິດຕໍ່ຜ່ານທາງໂທລະສັບ: ສຳລັບບຸກຄົນສາມາດຕິດຕໍ່ກ່ຽວກັບກົນໄກການໄກ່ເກ່ຍ ເພື່ອສະເໜີກ່ຽວກັບການຮ້ອງທຸກ ແລະ ຂໍ້ຂ້ອງໃຈ. ເບີໂທຕິດຕໍ່ຂອງຜູ້ປະສານຫຼັກໄດ້ລະບຸຢູ່ທາງລຸ່ມນີ້:

| | | | |
|---|---|---|---|
| ຜູ້ບໍລິຫານໂຄງການ ຢູ່ PMU: | 020 28 789 465 | ແຂວງບໍລິຄຳໄຊ: | 020 22 337 003 |
| ຜູ້ປະສານງານໂຄງການ ຢູ່ PIUs: | 020 55 509 966 | ແຂວງສະຫວັນນະເຂດ: | 020 55 229 888 |
| ນະຄອນຫຼວງວຽງຈັນ: | 020 22 220 466 | ແຂວງຈຳປາສັກ: | 020 98 989 889 |

• ຜ່ານທາງຈົດໝາຍ ຫຼື ອີເມວ: ສາມາດສົ່ງຈົດໝາຍພ້ອມກັບລາຍລະອຽດຂໍ້ມູນທີ່ກ່ຽວກັບກົນໄກການໄກ່ເກ່ຍເປັນບຸກຄົນ ຫຼື ເປັນກຸ່ມຫາຜູ້ປະສານງານຫຼັກທີ່ກ່ຽວຂ້ອງ ທີ່ຕິດພັນກັບບ້ານ/ເມືອງ/ແຂວງ.

• ການສື່ສານໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ: ສາມາດນຳສະເໜີກ່ຽວກັບກົນໄກການໄກ່ເກ່ຍຂອງຕົນບໍ່ວ່າຈະເປັນແບບບຸກຄົນ ຫຼື ກຸ່ມ ໂດຍຜ່ານຈາກການຈັດການສຳມະນາ, ການຝຶກອົບຮົມ, ກອງປະຊຸມປຶກສາຫາລື ແລະ ອື່ນໆ.

## ການລົງທະບຽນການຮ້ອງທຸກ

ທຸກໆຂໍ້ສົງໄສ, ສິ່ງທີ່ກັງວົນ ແລະ ການຮ້ອງທຸກ ຈະໄດ້ບັນທຶກໄວ້ໂດຍຜູ້ປະສານງານ ຫຼື ຈຸດທີ່ປະສານງານທີ່ກຳນົດໄວ້ໃນທະບຽນເປັນພາສາລາວ ແລະ ພາສາອັງກິດຕາມເຫັນສົມຄວນ. ການລົງທະບຽນການໄກ່ເກ່ຍລວມມີຄື:

• ເວລາ, ວັນທີ ແລະ ສະຖານທີ່ຂອງບ່ອນຮ້ອງທຸກ.

• ຊື່, ສະຖານທີ່ ແລະ ຊັບພະຍາກອນທຳມະຊາດຂອງໂຄງການທີ່ເກີດ ຫຼື ອາດຈະເຮັດໃຫ້ເກີດຜົນກະທົບທາງລົບ.

• ຊື່, ທີ່ຢູ່ ແລະ ເບີຕິດຕໍ່ ຂອງຜູ້ຮ້ອງທຸກ; ຖ້າຫາກວ່າເອກະສານຮ້ອງທຸກໄດ້ສົ່ງຜ່ານຜູ້ຕາງໜ້າ, ຕ້ອງມີເອກະສານມອບສິດ ແລະ ຢັ້ງຢືນໃນການຍິນຍອມເພື່ອຍື່ນເອກະສານຮ້ອງທຸກ.

• ປະເພດຂອງຊ່ອງທາງໃນການສື່ສານ.

• ຄຳອະທິບາຍຫຍໍ້ກ່ຽວກັບລັກສະນະຂອງການຮ້ອງທຸກ ຫຼື ທີ່ມີຄວາມກັງວົນ.

• ວັນທີ ຂອງການຕອບຮັບ ແລະ ການສືບສວນໄດ້ດຳເນີນເປັນຜົນມາຈາກການສືບສວນ, ຄຳຮ້ອງທຸກ ຫຼື ສິ່ງທີ່ກັງວົນ; ແລະ

• ການປະຕິບັດ, ວັນທີ ແລະ ຊື່ຂອງຜູ້ຮັບຜິດຊອບ.

# ກົນໄກການໄກ່ເກ່ຍ

ພາຍຫຼັງທີ່ໄດ້ຮັບເອກະສານກ່ຽວກັບການໄກ່ເກ່ຍ, ຜູ້ປະສານງານຫຼັກຈະຕ້ອງດຳເນີນການທັນທີໂດຍຜ່ານການຮັບຮູ້ຈາກຜູ້ຮ້ອງທຸກ, ຜ່ານການປະເມີນສິດ ແລະ ໜ້າທີ່ຮັບຜິດຊອບກົນໄກການໄກ່ເກ່ຍແບບສະເພາະຂອງໂຄງການ ຈະໄດ້ຜ່ານລະບົບທັງໝົດ 3 ຂັ້ນຕອນເພື່ອໄກ່ເກ່ຍ.

**ຂັ້ນທີ 1**
**(ພາຍໃນ 15 ວັນ)**

ລະດັບ
ທ້ອງຖິ່ນ/ບ້ານ
ແລະ/ຫຼື ເມືອງ

ການໄກ່ເກ່ຍໃນຂັ້ນທ້ອງຖິ່ນ/ບ້ານ ແລະ/ຫຼື ເມືອງ. ພາກສ່ວນທີ່ກ່ຽວຂ້ອງຕ້ອງໄດ້ແຈ້ງໃຫ້ຊາບກ່ຽວກັບວິທີການສົ່ງຄຳຮ້ອງທຸກ ແລະ/ຫຼື ຄຳຮ້ອງທຸກທີ່ໄດ້ຮັບຈາກເຈົ້າໜ້າທີ່ ວຽກງານກວດກາຕິດຕາມ ແລະ ບົດບາດຍິງ-ຊາຍ. ເຈົ້າໜ້າທີ່ຮັບຜິດຊອບ ວຽກງານກວດກາຕິດຕາມ ແລະ ບົດບາດຍິງ-ຊາຍ ຈະປະສານຫາຜູ້ທີ່ກ່ຽວຂ້ອງຂັ້ນບ້ານ ຫຼື ເມືອງ ເພື່ອໄຂຂໍ້ຂ້ອງໃຈ. ຂັ້ນບ້ານ ຫຼື ຂັ້ນເມືອງຈະໄດ້ຮັບການຝຶກອົບຮົມກ່ຽວກັບຫຼັກການ ຂອງການໄກ່ເກ່ຍແກ້ໄຂຂໍ້ຂັດແຍ່ງເພື່ອໃຫ້ສາມາດດຳເນີນເປັນລະບົບ ແລະ ນຳໃຊ້ໃນຕໍ່ໜ້າ.

**ຂັ້ນທີ 2**
**(ພາຍໃນ 25 ວັນ)**

ລະດັບແຂວງ

ຖ້າຫາກວ່າການໄກ່ເກ່ຍບໍ່ສາມາດເຮັດໃຫ້ຜູ້ຮ້ອງທຸກເພິ່ງພໍໃຈ ຫຼື ແກ້ໄດ້ໃນ ຂັ້ນທີ 1 ຫຼື 15 ວັນ, ຄະນະກຳມະການການໄກ່ເກ່ຍສາມາດດຳເນີນການໃນຂັ້ນທີ 2. ໃນຂັ້ນນີ້ຄຳຮ້ອງທຸກຈະຖືກແກ້ໄຂໂດຍຄະນະກຳມະການຂັ້ນແຂວງ ເຊິ່ງຈະຖືກແຕ່ງຕັ້ງຂຶ້ນໃນແຕ່ລະແຂວງ. ບັນດາຄະນະກຳມະການມີໜ້າທີ່ຄືດັ່ງນີ້:

- ຈັດລຳດັບຄວາມສຳຄັນຂອງຄຳຮ້ອງທຸກ ແລະ ແກ້ໄຂໃຫ້ໄວທີ່ສຸດ;
- ສະໜອງຂໍ້ມູນໃຫ້ໜ່ວຍງານຄຸ້ມຄອງໂຄງການ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນກໍລະນີມີເຫດຮ້າຍແຮງໃຫ້ດ່ວນທີ່ສຸດ;
- ປະສານສົມທົບກັບຜູ້ທີ່ໄດ້ຮັບຜົນກະທົບກ່ຽວກັບການໄກ່ເກ່ຍ ແລະ ສະໜອງຂໍ້ມູນທີ່ເໝາະສົມ ແລະ ທັນເວລາ; ແລະ
- ບົນພື້ນຖານບົດຮຽນທີ່ຖອດຖອນ, ການແນະນຳຂອງໜ່ວຍງານຄຸ້ມຄອງໂຄງການ, ຄະນະຊີ້ນຳໂຄງການຂັ້ນສູນກາງ ແລະ ຄະນະຊີ້ນຳຂັ້ນທ້ອງຖິ່ນ ໃນການແກ້ໄຂເພື່ອຫຼີກເວັ້ນບໍ່ໃຫ້ເກີດເຫດການເພີ່ມຂຶ້ນ.

ຄະນະກຳມະການການໄກ່ເກ່ຍ ຈະຕ້ອງຈັດກອງປະຊຸມທີ່ຈຳເປັນທຸກຄັ້ງຮ່ວມກັບພາກສ່ວນທີ່ຖືກຮ້ອງທຸກ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ເພື່ອພະຍາຍາມຫາທາງແກ້ໄຂທີ່ສາມາດຍອມຮັບໄດ້ໃນທຸກຂັ້ນ. ຄະນະກຳມະການການໄກ່ເກ່ຍຈະຕ້ອງມີບົດບັນທຶກກອງປະຊຸມ. ພ້ອມທັງ, ເຈົ້າໜ້າທີ່ວຽກງານກວດກາຕິດຕາມ ແລະ ບົດບາດຍິງ-ຊາຍ ຈະຕ້ອງມີສ່ວນຮ່ວມທຸກກອງປະຊຸມຂອງຄະນະກຳມະການ. ຄະນະກຳມະການການໄກ່ເກ່ຍຈະແຈ້ງຕອບຄຳສະເໜີຈາກຜູ້ຮ້ອງທຸກໃນຮູບແບບຢ່າງເປັນທາງການ. ຖ້າຫາກວ່າການແກ້ໄຂທີ່ໄດ້ສະເໜີໃຫ້ແກ່ຜູ້ຮ້ອງທຸກເປັນທີ່ເພິ່ງພໍໃຈ, ຂໍ້ແກ້ໄຂດັ່ງກ່າວຈະຖືກຈັດຕັ້ງປະຕິບັດ ແລະ ຄຳຮ້ອງຮຽນແມ່ນຈະຖືກປິດລົງ. ໃນກໍລະນີທີ່ຂໍ້ແກ້ໄຂທີ່ນຳສະເໜີໃຫ້ຜູ້ຮ້ອງທຸກບໍ່ເປັນທີ່ໜ້າເພິ່ງພໍໃຈ ຄະນະກຳມະການການໄກ່ເກ່ຍສາມາດດຳເນີນການຄົ້ນຄວ້າຄືນ ເພື່ອຕອບສະໜອງຂໍ້ກັງວົນຂອງຜູ້ຮ້ອງທຸກ ຫຼື ຊີ້ແຈງແກ່ຜູ້ຮ້ອງທຸກກ່ຽວກັບທາງເລືອກອື່ນທີ່ອາດຈະເປັນໄປໄດ້. ຖ້າຫາກວ່າຜູ້ຮ້ອງທຸກບໍ່ພໍໃຈກັບມະຕິ ອາດຈະຕັດສິນໃຈດຳເນີນການທາງກົດໝາຍ ຫຼື ການຊ່ວຍເຫຼືອອື່ນໆ.

**ຂັ້ນທີ**
**(ພາຍໃນ 35 ວັນ)**

ລະດັບຊາດ

ຖ້າຫາກວ່າການໄກ່ເກ່ຍບໍ່ສາມາດເຮັດໃຫ້ຜູ້ຮ້ອງທຸກເພິ່ງພໍໃຈ ຫຼື ແກ້ໄດ້ໃນ ຂັ້ນທີ 2 ຫຼື 25 ວັນ, ຄະນະກຳມະການການໄກ່ເກ່ຍສາມາດດຳເນີນການເຂົ້າຂັ້ນທີ 3. ໃນຂັ້ນນີ້ຄຳຮ້ອງທຸກຈະຖືກແກ້ໄຂໂດຍຕາງໜ້າພາກສ່ວນທີ່ກ່ຽວຂ້ອງຂັ້ນກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮ່ວມກັບ ອົງການ ສະຫະປະຊາຊາດ ເພື່ອສິ່ງແວດລ້ອມ. ຫຼັງຈາກການສົ່ງຕໍ່ການຮ້ອງທຸກ ຈະຖືກແກ້ໄຂພາຍໃນ 35 ວັນ. ກໍລະນີການຮ້ອງທຸກທີ່ເປັນອັນຕະລາຍຮ້າຍແຮງ ຫຼື ມີຄວາມສ່ຽງຕໍ່ຄວາມເສຍຫາຍ, ແລະ/ຫຼື ການລະເມີດສິດທິຮ້າຍແຮງຈະຖືກແກ້ໄຂໂດຍກົງໃນກົນໄຂ ຂັ້ນທີ 3, ຊຶ່ງອາດຈະຊອກຫາການປະເມີນແບບເອກະລາດ ແລະ/ຫຼື ການສ້າງຕັ້ງກຳມະການການໄກ່ເກ່ຍເພື່ອຊອກຫາການແກ້ໄຂທີ່ເໝາະສົມເພື່ອແກ້ໄຂກໍລະນີດັ່ງກ່າວ. ຖ້າຫາກວ່າຜູ້ຮ້ອງທຸກບໍ່ພໍໃຈກັບມະຕິ ອາດຈະຕັດສິນໃຈດຳເນີນການທາງກົດໝາຍ ຫຼື ການຊ່ວຍເຫຼືອອື່ນໆ.

## II. ກົນໄກການໄກ່ເກ່ຍທີ່ສົມບູນ:

### ກົນໄກການມີສ່ວນຮ່ວມຈາກພາກສ່ວນທີ່ກ່ຽວຂ້ອງຂອງ ອົງການ ສປຊ ເພື່ອສິ່ງແວດລ້ອມ.

ກົນໄກການມີສ່ວນຮ່ວມຈາກພາກສ່ວນທີ່ກ່ຽວຂ້ອງເຮັດໜ້າທີ່ເປັນກົນໄກເສີມໃຫ້ແກ່ການໄກ່ເກ່ຍໃນຂັ້ນທ້ອງຖິ່ນ ແລະ ກົນໄກທີ່ຖືກສ້າງຕັ້ງຂຶ້ນສໍາລັບກິດຈະກໍາ ແລະ ໂຄງການທີ່ໄດ້ຮັບທຶນຈາກ ອົງການ ສປຊ ເພື່ອສິ່ງແວດລ້ອມ. ກົນໄກການໄກ່ເກ່ຍຂອງທ້ອງຖິ່ນ ແລະ ສະເພາະໂຄງການແມ່ນຈຸດທໍາອິດໃນການຕິດຕໍ່ກັບພາກສ່ວນກ່ຽວຂ້ອງທີ່ອາດຈະໄດ້ຮັບຜົນກະທົບທາງລົບຈາກ ກິດຈະກໍາ ແລະ ໂຄງການທີ່ໄດ້ຮັບທຶນຈາກ ອົງການ ສປຊ ເພື່ອສິ່ງແວດລ້ອມ. ໃນກໍລະນີການຮ້ອງທຸກດັ່ງກ່າວບໍ່ໄດ້ຮັບການແກ້ໄຂໃນຂັ້ນທ້ອງຖິ່ນ ຫຼື ໃນກໍລະນີທີ່ກົນໄກການໄກ່ເກ່ຍສະເພາະຂອງໂຄງການອາດບໍ່ແມ່ນທາງເລືອກໃນການຮ້ອງທຸກ, ພາກສ່ວນດັ່ງກ່າວສາມາດຕິດຕໍ່ປະສານຫາກົນໄກການມີສ່ວນຮ່ວມ ຈາກພາກສ່ວນທີ່ກ່ຽວຂ້ອງຂອງ ອົງການ ສປຊ ເພື່ອສິ່ງແວດລ້ອມ. ການຮ້ອງທຸກທີ່ກ່ຽວກັບການສໍ້ລາດບັງຫຼວງ ຫຼື ການປະຕິບັດທີ່ບໍ່ມີຈັນຍາບັນຄວນຕິດຕໍ່ຫາກົນໄກການມີສ່ວນຮ່ວມຈາກພາກສ່ວນທີ່ກ່ຽວຂ້ອງຂອງອົງການ ສປຊ ເພື່ອສິ່ງແວດລ້ອມໂດຍທັນທີ.
ການຮ້ອງທຸກສາມາດສົ່ງໃຫ້ ອົງການ ສປຊ ເພື່ອສິ່ງແວດລ້ອມພາກສ່ວນທີ່ກ່ຽວຂ້ອງກັບ ການຕອບໂຕ້ການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ (IOSSR) ຜ່ານໄດ້ 3 ຊ່ອງທາງຄື:

1) ສາມາດດາວໂຫຼດແບບຟອມເພື່ອຮ້ອງທຸກຂອງໂຄງການຜ່ານທາງອອນລາຍ (ໜ້າເວັບ ແລະ ໄຟລ PDF ແມ່ນຈະມີ ພາສາອັງກິດ, ອາລາບິກ, ຈີນ, ຝຣັ່ງ, ລັດເຊຍ ຫຼື ແອັດສະປາຍ)
https://www.unep.org/about-un-environment/why-does-un-environment-matter/un-environment-project-concern
2) ສົ່ງອີເມວຫາ unep-iossr@un.org
3) ສົ່ງໄປສະນີຫາທີ່ຢູ່ດັ່ງລຸ່ມນີ້:
Independent Office for Stakeholder Safeguard-related Response (IOSSR) & Director of Corporate Service Division
UNEP P.O. Box 30552, 00100
Nairobi, Kenya

### ກົນໄກການຕອບໂຕ້ແບບເອກະລາດ (IRM) ຂອງ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາກົນ

ຖ້າຫາກວ່າບຸກຄົນໃດ ຫຼື ກຸ່ມ, ຊຸມຊົນໃດທີ່ໄດ້ຮັບຜົນກະທົບທາງລົບຈາກໂຄງການ ຫຼື ກິດຈະກໍາ ພາຍໃຕ້ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາກົນສາມາດຕື່ມແບບຟອມຮ້ອງທຸກຜ່ານ ກົນໄກການຕອບໂຕ້ແບບເອກະລາດ ຂອງ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາ ກົນ. ຜູ້ທີ່ໄດ້ຮັບຜົນກະທົບສາມາດມອບໃຫ້ຜູ້ຕາງໜ້າ ຫຼື ພາກລັດເປັນຜູ້ຕື່ມແບບຟອມໃຫ້. ສາມາດສົ່ງແບບຟອມຮ້ອງທຸກຕາມຊ່ອງທາງລຸ່ມນີ້:

- ສົ່ງຜ່ານໄປສະນີ ຫຼື ອີເມວ: irm@gcfund.org
- ສົ່ງບັນທຶກສຽງ ຫຼື ວິດີໂອ;
- ຕື່ມຂໍ້ມູນຜ່ານລະບົບອອນລາຍໃສ່ໃນຟອມຮ້ອງທຸກ.

https://gcf.i-sight.com/external/case/new/group=Complaint

ການຮ້ອງທຸກສາມາດຕື່ມເປັນພາສາອັງກິດ ຫຼື ພາສາທ້ອງຖິ່ນຂອງຜູ້ຮ້ອງທຸກ. ຢ່າງໃດກໍ່ຕາມບົດຮ້ອງທຸກຈະໄດ້ຖືກແປເປັນພາສາອັງກິດ. ຖ້າບໍ່ດັ່ງນັ້ນ ທາງກົນໄກການຕອບໂຕ້ແບບເອກະລາດຂອງ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາກົນ ຈະໄດ້ແປເອກະສານ ແລະ ຕອບກັບແກ່ຜູ້ຮ້ອງທຸກເປັນພາສາທ້ອງຖິ່ນ. ການຮ້ອງທຸກແບບນີ້ແມ່ນບໍ່ຈໍາເປັນຕ້ອງສະເໜີແບບເປັນທາງການກ່ອນ. ຜູ້ຮ້ອງທຸກຕ້ອງໄດ້ປະກອບຂໍ້ມູນດັ່ງນີ້:

- ຊື່ຂອງຜູ້ຮ້ອງທຸກ, ທີ່ຢູ່ ແລະ ຂໍ້ມູນຕິດຕໍ່ພົວພັນ;
- ຖ້າຫາກວ່າການຮ້ອງທຸກນັ້ນໄດ້ຖືກຕື່ມໂດຍຜູ້ຕ່າງໜ້າຕ້ອງມີຂໍ້ມູນຂອງທັງສອງຄືຜູ້ຕາງໜ້າ ແລະ ຜູ້ຮ້ອງທຸກພ້ອມກັບຫຼັກຖານທີ່ເປັນທາງການທີ່ໄດ້ຮັບການຢັ້ງຢືນຈາກພາກລັດໃນການຍິນຍອມໃຫ້ຜູ້ຕາງໜ້າຮ້ອງທຸກແທນ;
- ໃຫ້ລາຍລະອຽດກ່ຽວກັບໂຄງການ ຫຼື ກິດຈະກໍາທີ່ອາດຈະກໍ່ໃຫ້ເກີດມີຜົນກະທົບໃນການຮ້ອງທຸກ;
- ໃຫ້ລາຍລະອຽດກ່ຽວກັບວິທີການການຮ້ອງທຸກທີ່ອາດຈະສົ່ງຜົນກະທົບໂດຍໂຄງການ ຫຼື ກິດຈະກໍາ;
- ເຖິງເລື່ອງຈະເປັນຄວາມລັບກໍ່ຈະຖືກສອບຖາມກ່ຽວກັບເຫດຜົນທີ່ເກີດຂຶ້ນ.

ຂໍ້ມູນຕິດຕໍ່
ຫົວໜ້າໂຄງການ: ທ່ານ ອໍາໄພວັນ ອຸດົມເດດ
ອີເມວ: amphayvanh.oudomdeth@gmail.com

ອົງການສະຫະປະຊາຊາດ ເພື່ອສິ່ງແວດລ້ອມ (UNEP)
ຫົວຫນ້າທີ່ປຶກສາດ້ານວິຊາການ: Shyam K Paudel, PhD
ອີເມວ: shyam.paudel@un.org

GREEN CLIMATE FUND
UN environment programme